ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ PWT

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ຫ້ອງການກະຊວງ

21918

ເລກທີ: .......... /ຍທຂ.ຫກ

ນະຄອນຫຼວງວຽງຈັນ, ວັນທີ: 04 SEP 2019

**ແຈ້ງຕອບຄໍາສະເໜີຂອງປະຊາຊົນຜ່ານສາຍດ່ວນ ສະພາ 156 ແລະ ສາຍດ່ວນ 1518 ຂອງຂະແໜງ ຍທຂ.**

<u>ຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ</u>

1. ປະຊາຊົນບ້ານ ບໍ່ເຕັນ, ເມືອງ ຫຼວງນໍ້າທາ, ແຂວງ ຫຼວງນໍ້າທາ ຈໍານວນ 16 ຄອບຄົວ ທີ່ຍັງບໍ່ໄດ້ຮັບການຊົດເຊີຍນັ້ນຍ້ອນວ່າດິນ ແລະ ເຮືອນຂອງປະຊາຊົນແມ່ນບໍ່ໄດ້ຮັບຜົນກະທົບຈາກການກໍ່ສ້າງທາງລົດໄຟໝາຍຄວາມວ່າຢູ່ນອກຂອບເຂດສະຫງວນຂອງເສັ້ນທາງລົດ (ເສັ້ນແລວແດງ), ສະນັ້ນ ຈິ່ງບໍ່ສາມາດຊົດເຊີຍໄດ້ ເພາະຜິດກັບລະບຽບ ແລະ ທາງຄະນະກໍາມະການໄກ່ເກ່ຍຂອງແຂວງກໍ່ໄດ້ລົງໄປລຸງລວງນໍາພວກກ່ຽວໃຫ້ເຂົ້າໃຈແລ້ວ.
2. ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການກໍ່ສ້າງທາງລົດໄຟລາວ-ຈີນໂດຍສະເພາະແມ່ນປະຊາຊົນຈາກ: ນະຄອນຫຼວງວຽງຈັນ, ແຂວງ ອຸດົມໄຊ ແລະ ແຂວງ ວຽງຈັນ; ສະເໜີບັນຫາທີ່ຍັງບໍ່ທັນໄດ້ຮັບເງິນຊົດເຊີຍທີ່ດິນ ແລະ ເຮືອນນັ້ນ ປັດຈຸບັນທາງແຂວງຍັງບໍ່ທັນໄດ້ຮັບເງິນເພື່ອໄປເບີກຈ່າຍຄ່າຊົດເຊີຍ, ຍັງລໍຖ້າງົບປະມານຈາກຂັ້ນສູນກາງຊຶ່ງເປັນຮ່ວງເງິນງົບປະມານຂອງລັດຖະບານ (250 ຕື້ກີບ). ຮອດວັນທີ 06/08/2019 ກະຊວງການເງິນ (ກົມຄັງເງິນແຫ່ງຊາດ) ກໍາລັງດໍາເນີນການໂອນເງິນຈໍານວນ 143 ຕື້ ໃຫ້ບັນດາແຂວງ.
3. ປະຊາຊົນເມືອງ ວັງວຽງ, ແຂວງ ວຽງຈັນ ສະເໜີບັນຫາການຊົດເຊີຍຜົນກະທົບຈາກໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ ຜ່ານມາໄດ້ມີພາກສ່ວນກ່ຽວຂ້ອງລົງໄປລຸ່ລ່ວງ ແລະ ເກັບເອົາໃບຕາດິນຂອງປະຊາຊົນ ພ້ອມທັງເວົ້າວ່າ: ພາຍໃນຕົ້ນປີ 2019 ຈະໄດ້ຮັບການຊົດເຊີຍ. ແຕ່ປັດຈຸບັນຍັງບໍ່ທັນໄດ້ຮັບການຊົດເຊີຍໃດໆ. ຕໍ່ບັນຫາດັ່ງກ່າວນັ້ນເມືອງວັງວຽງໄດ້ຮັບຜົນກະທົບຈາກໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ ທັງໝົດ 16 ບ້ານ, ໃນໄລຍະຜ່ານມາຄະນະກໍາມະການໄກ່ເກ່ຍຂອງແຂວງ ໄດ້ລົງສ້າງເອກະສານການຢັ້ງຢືນ 7 ລາຍເຊັນ ເພື່ອເຂົ້າແຜນການເບີກຈ່າຍຊົດເຊີຍພ້ອມນັ້ນກໍ່ໄດ້ທໍາການຊົດເຊີຍໃຫ້ແກ່ຄອບຄົວຜູ້ຖືກຜົນກະທົບ ໂດຍສະເພາະແມ່ນໄດ້ຈັດລຽງບູລິມະສິດການຊົດເຊີຍ ຜົນກະທົບປະເພດສິ່ງປຸກສ້າງກ່ອນ ເພາະມີຄວາມຈໍາເປັນ ເພື່ອໃຫ້ປະຊາຊົນມີເງິນໄປຊື້ດິນ ແລະ ຕັ້ງເຮືອນຢູ່ບ່ອນໃໝ່ ຈໍານວນ 111 ຄອບຄົວ, ປ່າຊ້າ 3 ແຫ່ງເປັນ

34,269,049,200 ກີບ. ສ່ວນທີ່ຍັງເຫຼືອແມ່ນຄະນະໄກ່ເກ່ຍແຂວງວຽງຈັນສົມທົບກັບບໍລິສັດທາງລົດໄຟ ລາວ-ຈີນ ຈັດລຽງເຂົ້າບູລິມະສິດການປະກອບຈ່າຍໃນບ້ວງ 250 ຕື້ກີບ.

4. ປະຊາຊົນບ້ານ ນາເຕີຍ, ເມືອງ ຫຼວງນ້ຳທາ, ແຂວງ ຫຼວງນ້ຳທາ ສະເໜີບັນຫາທີ່ປະຊາຊົນຖືກຜົນກະທົບຈາກໂຄງການກໍ່ສ້າງທາງລົດໄຟ ລາວ-ຈີນ ໃນເບື້ອງຕົ້ນໂຄງການຈະຊົດເຊີຍຕໍ່ຜູ້ຖືກຜົນກະທົບດ້ວຍເງິນ, ແຕ່ໄລຍະຕໍ່ມາທາງໂຄງການວ່າຈະຊົດເຊີຍດ້ວຍການປຸກເຮືອນ ແລະ ຈັດສັນດິນໃຫ້. ມາຮອດປັດຈຸບັນເຮືອນ ແລະ ດິນກໍ່ບໍ່ທັນໄດ້ຮັບ, ຈິດໃຈຂອງປະຊາຊົນແມ່ນຢາກໄດ້ການຊົດເຊີຍດ້ວຍເງິນ.

ຕໍ່ປະເດັນດັ່ງກ່າວ"ໃນເບື້ອງຕົ້ນໂຄງການຈະຊົດເຊີຍຕໍ່ຜູ້ທີ່ຖືກຜົນກະທົບດ້ວຍເງິນ, ແຕ່ໄລຍະຕໍ່ມາໂຄງການຈະຊົດເຊີຍດ້ວຍການປຸກເຮືອນ ແລະ ຈັດສັນດິນໃຫ້" ເພາະວ່າ: ງົບປະມານເງິນສົດມີຈຳນວນຈຳກັດ, ສ່ວນການຈັດສັນບ້ານໃໝ່ແມ່ນການຊ່ວຍເຫຼືອລ້າຂອງລັດຖະບານຈີນ ບ້ວງເງິນ 250 ລ້ານຢວນ, ຊຶ່ງວຽກງານຈັດສັນດັ່ງກ່າວກຳລັງດຳເນີນການຢູ່, ປັດຈຸບັນຝ່າຍຈີນກຳລັງສ້າງເອກະສານໂຄງການ, ກະກຽມປະມູນ ຄາດວ່າ ຈະໄດ້ລົງມືກໍ່ສ້າງຕົວຈິງໃນໄວໆນີ້.

5. ປະຊາຊົນບ້ານ ນາໝໍ້ໃຕ້, ເມືອງ ນາໝໍ້, ແຂວງ ອຸດົມໄຊ ສະເໜີບັນຫາຝາຍຊົນລະປະທານເຂດບ້ານ ຖືກບໍລິສັດທີ່ເຮັດໂຄງການກໍ່ສ້າງເສັ້ນທາງລົດໄຟ ລາວ-ຈີນ ນຳໃຊ້ພື້ນທີ່ດິນເຂດນັ້ນໃນການຂົນດິນເພື່ອກໍ່ສ້າງ ເຮັດໃຫ້ຝາຍນ້ຳໄດ້ຮັບການເປ່ເພ ແລະ ບໍ່ໄດ້ຮັບການສ້ອມແປງຄືນ ຊຶ່ງຝາຍດັ່ງກ່າວເປັນຝາຍທີ່ປະຊາຊົນນຳໃຊ້ເຂົ້າໃນການຜະລິດກະສິກຳເປັນຕົ້ນແມ່ນການປູກເຂົ້ານັ້ນ. ແມ່ນມີບໍລິສັດກໍ່ສ້າງທາງລົດໄຟນຳໃຊ້ພື້ນທີ່ດັ່ງກ່າວໃນການຂົນດິນຖົມເພື່ອກໍ່ສ້າງເຮັດໃຫ້ຝາຍຊົນລະປະທານເປ່ເພແທ້, ມາຮອດວັນທີ 03/07/2019 ໄດ້ຮັບການສ້ອມແປງສຳເລັດ 100%. ປະຈຸບັນນີ້ແມ່ນໄດ້ດຳເນີນການຜະລິດ ຢ່າງເປັນປົກະຕິແລ້ວ.

ເຊັ່ງແທນ ຫົວໜ້າຫ້ອງການກະຊວງ

ຈັນຖະໜອມ ສຸລິໄຍ